# ຕົ້ນໝາກນາວຂອງມະໂນລາ

ມະໂນລາ, *ເຈົ້າຍິງຜູ້ຫຼ້າຂອງກິນນາຣີ*

ກາລີ, *ເຈົ້າຍິງຜູ້ກົກຂອງກິນນາຣີ*

ລານີ, *ເຈົ້າຍິງຜູ້ທີສອງຂອງກິນນາຣີ*

ດາຣາ, *ເຈົ້າຍິງຜູ້ທີສາມຂອງກິນນາຣີ*

ເທບ, *ລືສີ*

ພະລາຊາເມືອງເປັງຈານ, *ພໍ່ຂອງສີທົນ*

ມະເຫສີຂອງພະລາຊາເມືອງເປັງຈານ, *ແມ່ຂອງສີທົນ*

ເຈົ້າສີທົນ, *ເຈົ້າຊາຍເມືອງເປັງຈານ*

ນາຍົກລັດຖະມົນຕີ

ນັກບວດ

ພະລາຊາສຸກັນດີມາ, *ກະສັດຂອງລາຊະອານາຈັກໃກ້ຄຽງ*

ເຟີຈ່າຍ, *ຊາວນາລາວສູງ*

ຮົ່ວ, *ເມຍຊາວນາລາວສູງ*

ຊຽງໝັ້ງ, *ນາຍບ້ານ (ນັກຕົວະຕົ້ມ)*

**ສາກທີໜຶ່ງ**

*ໄຟສະປອດໄລຕ໌ສ່ອງໃສ່ນັກຟ້ອນກິນນາຣີ ຊຶ່ງຈົ້ງຢູ່ເໝືອນຮູບປັ້ນ ຕໍ່ມາຈຶ່ງເລີ່ມຟ້ອນຊ້າໆ*

ມະໂນລາ: ເໝືອນດັ່ງນິທານໜ້າສົນໃຈທັງຫຼາຍ ເລື່ອງລາວຂອງຂ້ອຍເລີ່ມຕົ້ນ
ແຕ່ກ່ອນກີ້ ເນີ້ນນານມາແລ້ວ - ຢູ່ສະຖານທີ່ຊຶ່ງຄັ້ງໜຶ່ງເຄີຍມີຢູ່ຈິງ
ແຕ່ມາປັດຈຸບັນນີ້ໄດ້ກາຍເປັນເລື່ອງຈິນຕະນາການໄປແລ້ວ, ເມື່ອພູຜາປ່າ
ໄມ້ທຸກແຫ່ງຫົນຖືກຄຸກຄາມ ໃຫ້ກາຍເປັນຄວາມຝັນອັນໄກແສນໄກ.
*(ບັນດາກິນນາຣີອອກມາຟ້ອນ ແລ້ວບິນຂຶ້ນໄປເທິງອາກາດ)*

ພວກເຮົາເປັນລູກສາວຂອງກະສັດກິນນາຣີ, ເຮືອນທໍຂອງພວກ
ເຮົາຢູ່ປ່າຫິມະບັນຕະພຸ້ນ ເປັນຜາສາດຊຽວງົດງາມ ຢູ່ລະຫວ່າງ
ສາຍນ້ຳແລະໝູ່ເມກ. ພໍ່ແມ່ປ່ອຍໃຫ້ພວກເຮົາບິນໄປ ທົ່ວທຸກແຫ່ງ
ຫົນໃນໂລກນີ້ຢ່າງອິດສະລະ ຍົກເວັ້ນແຕ່ໜອງບົກຄາຣານີພຽງທໍ່ນັ້ນ.

ແຕ່ຄືນເດືອນຫງາຍມື້ໜຶ່ງ ເມື່ອບິນຜ່ານນ້ຳສີເງິນເຫຼື້ອມຂອງໜອງນັ້ນ ພວກເຮົາກໍຍິ່ງຢາກຮູ້ວ່າ ເປັນຫຍັງເພິ່ນຈຶ່ງຫ້າມບໍ່ໃຫ້ໄປບ່ອນນີ້.

ກາລີ: ຂ້ອຍອົດບໍ່ໄຫວແລ້ວ. ພວກເຮົາລົງໄປເທາະ.

ລານີ: ໄປອາບນ້ຳຄາວດຽວເທົ່ານັ້ນໃດ໋.

ກາລີ: ຈື່ໄວ້ເດີ້ ຢ່າບອກພໍ່ໃດ໋.

ດາຣາ: ຈັ່ງແມ່ນງາມນໍ້ ເປັນຕາອາບແທ້. *(ພວກນາງຖອດປີກອອກ ແລ້ວລົງຫຼິ້ນນ້ຳ)*

ມະໂນລາ: ນ້ຳເປັນຕາອາບແບບນີ້ ເປັນຫຍັງຈຶ່ງຫ້າມບໍ່ໃຫ້ພວກເຮົາມາ?

ລານີ: ນ້ຳຄືເສັ້ນໄໝນໍ້.

ມະໂນລາ: ພວກເຈົ້າລອງຂ້າມໄປເບື້ອງນັ້ນເບິ່ງດູ້.

*(ລີສີກັບນາຍພານລັກຈອບເບິ່ງກິນນາຣີ)*

ບັນ: ງາມຍິ່ງກວ່າຂ້ອຍຈິນຕະນາການໄວ້. ແຕ່ວ່າ...ບໍ່ແມ່ນເຈົ້າໃຊ້ເວດມົນ ລວງຕາຂ້ອຍບໍ.

ເທບ: ເວດມົນຂອງເຮົາບໍ່ວິເສດປານນັ້ນດ໋ອກ.

ບັນ: ຂ້ອຍຊິຈັບເອົານາງໜຶ່ງ.

ເທບ: ເຮົາສັນຍາກັບໂຕແລ້ວໃດ໋ ວ່າເຮົາຊິເບິ່ງຊື່ໆ. ກິນນາຣີອ່ອນແອ ໂພດສຳລັບໂຕ. ພວກນາງເປື່ອຍຢູ່ໃນມືໂຕຢ່າງແນ່ນອນ.

ບັນ: *(ເອົາມືບີບຄໍລີສີ)* ແຕ່ເຈົ້າຄືງບໍ່! ບອກມາໄວໆ ເຮັດແນວໃດ?

ເທບ: ໂຕເຄີຍບອກເຮົາເທື່ອໜຶ່ງແລ້ວບໍ່ແມ່ນຫວ໊ະ ວ່າໂຕເຄີຍຊ່ວຍຊີວິດພະຍານາກໄວ້ ແລະລາວເອົາບ້ວງບາດວິເສດໃຫ້ໂຕ?

ບັນ: ເອີ້, ແມ່ນໄດ້ນໍ້.

ເທບ: ເອົາປີກຂອງນາງໜຶ່ງທີ່ໂຕຢາກໄດ້ໄປເຊື່ອງໄວ້ ເມື່ອນາງບິນບໍ່ໄດ້ໂຕກໍເອົາບ້ວງບາດວິເສດມັດນາງໄວ້ເລີຍ.

ບັນ: ເຈົ້າຢ່າເຮັດໃຫ້ພວກນາງແຕກຕື່ນໃດ໋. *(ເຂົາຫົວ ແລ້ວເອົາປີກຂອງມະໂນລາໄປເຊື່ອງໄວ້)*

ກາລີ: *(ຂຶ້ນຈາກນໍ້າ)* ຂຶ້ນໄປ໋ ມະໂນລາ. ພວກເຮົາຕ້ອງໄປແລ້ວ.

ມະໂນລາ: ແຕ່ຂ້ອຍໄປບໍ່ໄດ້ນ່າ! *(ບັນຍ່າງອອກມາ ແລ້ວແກວ່ງບ້ວງບາດໃສ່. ພວກນາງນົກພາກັນຮ້ອງດ້ວຍຄວາມຢ້ານ ແລ້ວບິນຂຶ້ນ. ມະໂນແລ່ນຕາມຫຼັງພວກເອື້ອຍ. ບ້ວງບາດມັດນາງໄວ້.)* ຢຸດກ່ອນ! ກັບມາ! ຊ່ວຍນ້ອງແດ່!

ດາຣາ: ພວກເຮົາປະນາງໄວ້ບໍ່ໄດ້ໃດ໋.

ລານີ: ພວກເຮົາຊິເຮັດແນວໃດ?

ກາລີ: ພວກເຮົາບຸກໂຈມຕີພ້ອມກັນ. ລານີ, ນ້ອງຈິກຕາເບື້ອງໜຶ່ງຂອງມັນ, ເອື້ອຍຈິກຕາອີກເບື້ອງໜຶ່ງ. ດາຣາ, ນ້ອງດຶງບ້ວງບາດຂອງມັນອອກ. ບິນລົງເລີຍ! *(ບັນຍິງທະນູໃສ່ ແຕ່ພາດເປົ້າ. ມີແຕ່ກາລີທີ່ນັ້ນທີ່ຈິກຕານາຍພານ. ເຂົາດິ້ນໄປມາດ້ວຍຄວາມເຈັບປວດຢູ່ພື້ນດິນ.)*

ກາລີ: *(ບໍ່ສາມາດຊ່ວຍມະໂນລາເປັນອິດສະລະໄດ້).* ມະໂນລາ, ມັນແມ່ນບ້ວງບາດວິເສດໃດ໋. ເອື້ອຍບໍ່ສາມາດແກ້ມັນອອກໄດ້. ພວກເຮົາຕ້ອງໄປກ່ອນລະ. *(ພວກນາງບິນຂຶ້ນໄປ)*

ບັນ: *(ເອົາມີມຸບຕາໄວ້)* ເບິ່ງເນີ້...ກູຈະແກ້ແຄ້ນມຶງ ທີ່ມຶງຈິກຕາກູ.

ເທບ: *(ແລ່ນເຂົ້າມາ)* ໂຕໄດ້ນາງໜຶ່ງແລ້ວເນ້!

ບັນ: ເອົາຫວ້ານໄພເຈົ້າອອກມາ ປົວຕາໃຫ້ຂ້ອຍແດ່.

ເທບ: *(ເອົາຫວ້ານໄພໂພະໃສ່ຕາຂອງບັນ)* ບໍ່ຮູ້ວ່າມັນຊິຊ່ວຍໃຫ້ໂຕເຫັນໄດ້ບໍ່ ແຕ່ມັນຈະເຮັດໃຫ້ໂຕເຊົາປວດໄດ້.

ບັນ: ບໍ່ເປັນຫຍັງດ໋ອກ. ບັດນີ້ຂ້ອຍກາຍເປັນຄົນລວຍແລ້ວ.

ເທບ: ແທ້ໃດ໋ນໍ້! ມີພຽງບາງຄົນເທົ່ານັ້ນໃດ໋ ທີ່ໂຊກດີໄດ້ກິນນາຣີເປັນເມຍ!

ບັນ: ເປັນເມຍຫວ໊ະ! ພະລາຊາສຸກັນດູີມາກຳລັງຕຽມຈັດພິທີບູຊາຍັນ ສິ່ງມີຊີວິດຢ່າງຍິ່ງໃຫຍ່ຢູ່ໃດ໋. ພະອົງຈະເອົາລາງວັນຢ່າງງາມ ໃຫ້ແກ່ນາຍພານທີ່ເອົານາງກິນນາຣີມາໃຫ້. ໄປກ່ອນເດີ້, ລືສີໂງ່ເອີ້ຍ. *(ນາຍພານເອົາປີກຂອງນາງມະໂນລາໃສ່ຖົງ ແລ້ວເອົານາງແບກໃສ່ບ່າ)*

**ສາກທີສອງ** *(ບັນດານັກບວດຕຽມພິທີບູຊາຍັນ)*

ພະລາຊາສຸກັນດູີມາ: ຍິນດີຕ້ອນຮັບເຈົ້າຊາຍຜູ້ກຽດທຸກອົງ ທີ່ມາຮ່ວມພິທີບູຊາຍັນທີ່ຍິ່ງ ໃຫຍ່ທີ່ສຸດໃນໂລກ - ເບິ່ງດູ້ ມີສັດແຕ່ລະປະເພດໜຶ່ງໂຕ ຢືນລຽງລາຍກັນ ຍາວສຸດຫູສຸດຕາ! *(ເບິ່ງຜູ້ຊົມ)*. ໂອ້ ເຈົ້າຊາຍສີທົນ ມິດສະຫາຍ ຜູ້ຢູ່ເມືອງໃກ້ຄຽງ. ພວກເຮົາຮູ້ສຶກເປັນກຽດຢ່າງຍິ່ງທີ່ພະ ອົງມາຮ່ວມພິທີນຳ.

ສີທົນ: ແມ່ນແລ້ວພະອົງ ເປັນພິທີ...ທີ່ໜ້າປະທັບໃຈ. ມີສັດແປກປະຫຼາດ ຫຼາຍຢ່າງ ທີ່ເຮົາບໍ່ເຄີຍເຫັນຈັກເທື່ອ *(ສີໜ້າແປກໃຈ)* ແຕ່ວ່າໃນຈຳ ນວນນັ້ນ ມີແມ່ຍິງຄົນໜຶ່ງໃດ໋ນໍ້!

ພະລາຊາສຸກັນດູີມາ: ແມ່ນນາງກິນນາຣີ. ນາງຈະຖືກຂ້າເປັນຜູ້ສຸດທ້າຍ.

ສີທົນ: ຄັນຊັ້ນ ປີກຂອງນາງເດ້ ເອົາໄປໄວ້ໃສ?

ພະລາຊາສຸກັນດູີມາ: ພະອົງຕັດຖືກຕ້ອງແລ້ວ. ປີກຄືສິ່ງລ້ຳຄ່າທີ່ສຸດຂອງນາງ. ເຮົາຈະເອົາອອກມາໃຫ້ເບິ່ງ.

*(ມີຄົນນຳເອົາປີກອອກມາ ມະໂນລາແລ່ນອອກມາ. ນາງຮ້ອງດ້ວຍຄວາມຢ້ານກົວ. ສີທົນເອົາມືເຕະຣິມສົບ)*

ພະລາຊາສຸກັນດູີມາ: ບັດນີ້ ເລີ່ມພິທີໄດ້.

ນັກບວດ: ຂໍໃຫ້ລາຊາແຫ່ງພູເຂົາ, ເຈົ້າແມ່ແຫ່ງສາຍນ້ຳ, ເທວີ ເສຣີພະແມ່ແຫ່ງເຂົ້າ, ຈົ່ງຮັບຮູ້ການສູດມົນຂອງພວກເຮົາ ແລະຈົ່ງມາຮັບເອົາການບູຊາຍັນອັນຍິ່ງໃຫຍ່ ເພື່ອສັງເວີຍສິ່ງມີຊີວິດນັບເປັນລ້ານໆໂຕ ທີ່ອຸທິດຊີວິດຕົນ ເພື່ອສິ່ງທີ່ດີງາມແກ່ມວນມະນຸດທັງປວງ.

ພວກເຮົາຂໍຖະຫວາຍເນື້ອສົດດ້ວຍໃຈມຸ່ງໝັ້ນ ແລະຈິດທີ່ອ່ອນນ້ອມ, ຂອງອານາຈັກທີ່ມີຄວາມຫຼາກຫຼາຍ ຊຶ່ງພວກເຮົາປົກຄອງຢູ່, ດ້ວຍພິທີອາລັງການ ເປັນສິ່ງບູຊາຖະຫວາຍຢ່າງເຄົາລົບນົບນ້ອມ ທັງໝົດນີ້ແມ່ນເພື່ອສິ່ງທີ່ດີງາມແກ່ມວນມະນຸດທັງປວງ.

*(ສີທົນຈູດກະໂພກຂຶ້ນ. ທັນໃດນັ້ນ ພວກສັດກໍພາກັນຮ້ອງໂຫຍຫວນ ເຕັ້ນກະເຢັ້ງໄປມາ ຝູງກາດຳບິນອອກມາຈາກຕົ້ນໄມ້, ພວກໝູແລ່ນຜ່າຝູງຊົນ ເຮັດໃຫ້ຄົນແລະສັດແຕກຕື່ນແລ່ນໄປຄົນລະທິດລະທາງ. ທ່າມກາງຄວາມໂກລາຫົນ, ສີທົນເອົາແຂນເບື້ອງໜຶ່ງຈັບມະໂນລາ ແລະອີກເບື້ອງໜຶ່ງຈັບປີກຂອງນາງແລ່ນໜີໄປ.*

ບັນ: *(ຍ່າງໂຊເຊດ້ວຍອາການເມົາ)* ພະລາຊາສຸກັນດູີມາພິໂລດແລ້ວ. ພະອົງຮູ້ສຶກອັບອາຍຕໍ່ໜ້າເຈົ້າຊາຍທັງຫຼາຍ. ພະອົງສົ່ງພວກນັກເລງມາຈັດການກັບຂ້າແລ້ວເອົາເງິນລາງວັນທີ່ເອົານາງກິນນາລີມາໃຫ້ ຄືນໄປແລ້ວ. ດຽວນີ້ພະອົງຂູ່ວ່າຈະເຮັດສົງຄາມ ຖ້າບໍ່ເອົານາງກັບຄືນມາໃຫ້ພະອົງ.

*ເວທີມືດລົງ*

**ສາກທີສາມ** *(ຢູ່ຫ້ອງສ່ວນຕົວຂອງສີທົນ)*

ສີທົນ: *(ນັ່ງກັບມະໂນລາ)* ນ້ອງຍັງຢາກບິນໜີໄປຢູ່ບໍ?

ມະໂນລາ: ບໍ່ແມ່ນດຽວນີ້ເທື່ອ.

ສີທົນ: *(ເວົ້າຢອກ)* ມື້ອື່ນຊັ້ນບໍ?

ມະໂນລາ: ບາງທີອາດເປັນມື້ອື່ນ...ຂອງມື້ອື່ນ.

ສີທົນ: ນ້ອງບໍ່ດີໃຈບໍ ທີ່ອ້າຍຊ່ວຍຊີວິດນ້ອງ?

ມະໂລນາ: ແມ່ນອ້າຍຊັ້ນບໍ? ນ້ອງຄຶດວ່າແມ່ນພວກໜູພຸ້ນໃດ່ ພາກັນກັດເຊືອກທີ່ມັດນ້ອງໄວ້.

ສີທົນ: ອ້າຍລັກປ່ອຍພວກມັນອອກມາ ເພື່ອເຮັດໃຫ້ຄົນແຕກຕື່ນ.

ມະໂນລາ: ສັດນ້ອຍທີ່ສະຫຼາດ. *(ເວົ້າເຍີ້ຍ)* ພວກມັນມີບຸນຄຸນຕໍ່ນ້ອງ ຄືກັນກັບອ້າຍທັ້ນລະ.

ສີທົນ: ບາງທີ ນ້ອງຄົງຢາກແຕ່ງດອງກັບໜູ ແມ່ນບໍ?

ມະໂນລາ: ແຕ່ງດອງຫວ໊ະ? ແມ່ນໃຜເວົ້າເລື່ອງແຕ່ງດອງ?

ສີທົນ: ກະ...ອ້າຍກຳລັງເວົ້າຢູ່ນີ້ເນ້.

ມະໂນລາ: ນ້ອງບໍ່ແມ່ນຍິງແທ້ ຂ້ອຍແມ່ນນົກ ມີຈິດວິນຍານຂອງປ່າດົງ.

ສີທົນ: ນ້ອງຄູ່ຄວນທີ່ຈະເປັນຍິງທີ່ອ້າຍພໍໃຈ. ນ້ອງຈະບິນໜີໄປບໍ ເມື່ອອ້າຍຍ່າງອອກຈາກຫ້ອງນີ້ໄປ ເພື່ອໄປຂໍອະນຸຍາດສະເດັດພໍ່ ໃຫ້ພວກເຮົາແຕ່ງດອງກັນ?

ມະໂນລາ: ອ້າຍກະຮູ້ ວ່ານ້ອງບໍ່ສາມາດບິນໄດ້. ອ້າຍເອົາປີກຂອງນ້ອງໄປເຊື່ອງໄວ້ແລ້ວເດ້.

ສີທົນ: ແຕ່ງດອງກັບອ້າຍສາ ຖ້າບໍ່ຕົກລົງ ອ້າຍກໍຈະເອົາປີກຄືນໃຫ້ນ້ອງ ແລະບໍ່ມີວັນເຫັນໜ້ານ້ອງອີກເລີຍ. ມື້ອື່ນນີ້ ອ້າຍກໍຈະຜະເຊີນໜ້າກັບກອງທັບຂອງພະລາຊາສຸກັນດູີມາແລ້ວ. ພະອົງຂໍໃຫ້ສົ່ງນ້ອງຄືນໃຫ້ເພິ່ນ.

ມະໂນລາ: ຢ່າເອົານ້ອງມາເປັນຂໍ້ອ້າງ. ທີ່ຈິງເພິ່ນຕ້ອງການໄມ້ຂອງອ້າຍຫຼາຍກວ່າ.

ສີທົນ: ອ້າຍຮູ້. ໃນອະດີດເພິ່ນເຄີຍຊ່ວຍພວກເຮົາ ແຕ່ດຽວນີ້ພະອົງຕ້ອງການໄມ້ຫຼາຍເກີນໄປ.

ມະໂນລາ: ໃຫ້ນ້ອງໄປນຳອ້າຍແມ່. ນ້ອງຈະບິນຢູ່ສູງ ແລ້ວລາຍງານການເຄື່ອນໄຫວຂອງກອງທັບສັດຕູໃຫ້ອ້າຍຊາບ.

ສີທົນ: ບັດນີ້ ຢູ່ກັບຄອບຄົວຂອງອ້າຍ ນ້ອງກໍຈະປອດໄພແລ້ວ. ດັ່ງນັ້ນເວລາອ້າຍກັບມາ ນ້ອງຈະລໍຖ້າຢູ່ນີ້ບໍ?

ມະໂນລາ: ນ້ອງຈະລໍຖ້າ...ເພື່ອຜົວຂອງນ້ອງ. *(ນາງເອົາແຫວນໃຫ້ສີທົນ)*

**ສາກທີສີ່** *(ນະທີ່ຫ້ອງພະໂລງເມືອງເປັງຈານ)*

ນາຍຍົກລັດຖະມົນຕີ: ພະລາຊາຮັບປາກວ່າຈະຍົກນ້ອງສາວຂອງຂ້ອຍໃຫ້ອົງຊາຍສີທົນ ແຕ່ອົງຊາຍຊໍ້າພັດໄປແຕ່ງດອງກັບນາງກິນນາລີ ອີ່ແມ່ມົດນັ້ນ. ຂ້ອຍຕ້ອງເຮັດສິ່ງໃດສິ່ງໜຶ່ງແລ້ວລະ.

ນັກບວດ: ແມ່ນແລ້ວ, ເຂົາທຳລາຍແຜນການຂອງທ່ານແທ້.

ນາຍຍົກລັດຖະມົນຕີ: ເຂົາເປັນຕົວອັນຕະລາຍຕໍ່ປະເທດພວກເຮົາ.

ນັກບວດ: ທ່ານໄດ້ຍິນຂ່າວຫຍັງແດ່ຈາກແນວໜ້າ?

ນາຍຍົກລັດຖະມົນຕີ: ສີທົນກຳລັງໄດ້ຮັບໄຊຊະນະ.

ນັກບວດ: ແຕ່ທ່ານໄດ້ສົ່ງຂ່າວໄປແລ້ວເດ້ ເພື່ອຂັດຂວາງລາວບໍ່ແມ່ນຫວ໊ະ?

ນາຍຍົກລັດຖະມົນຕີ: ສົ່ງໄປແລ້ວ, ສອງອາທິດພຸ້ນນ່າ ຕັ້ງແຕ່ພະລາຊາບໍ່ໄດ້ຮັບຂ່າວຫຍັງຈາກອົງຊາຍຂອງເພິ່ນ.

ນັກບວດ: ຖ້າຈັ່ງຊັ້ນ ພວກເຮົາຕ້ອງລົງມືກັນແລ້ວລະ ກ່ອນທີ່ອົງຊາຍສີທົນຈະກັບມາ.

*ສຽງພິໂລດຂອງພະລາຊາດັງກ້ອງຢູ່ຫ້ອງພະໂລງ*

ພະລາຊາເມືອງເປັງຈານ: *(ພະອົງຍ່າງເຂົ້າມາ)* ເສນາອາມາດ ເຮົາຝັນຮ້າຍຫຼາຍ. ເຮົາຖືກພະລາຊາສຸກັນດູີມາຈັບໄດ້. ເພິ່ນເອົາດາບສຽບທ້ອງຂອງເຮົາ ແລ້ວຈົກໄສ້ຂອງເຮົາອອກມາ ຕໍ່ຈາກນັ້ນກໍເອົາປ່າວປະຈານທົ່ວເມືອງສາມຮອບ.

ນາຍົກລັດຖະມົນຕີ: ພະອົງ, ພວກເຮົາຫາກໍໄດ້ຮັບຂ່າວວ່າ ອົງຊາຍສີທົນຖືກຈັບເປັນສະເລີຍ. ດຽວນີ້ພະລາຊາສຸກັນດູີມາກຳລັງຍົກທັບມານະຄອນຂອງພວກເຮົາໃດ໋ ພະອົງ.

ພະລາຊາເມືອງເປັງຈານ: ພວກເຮົາຕ້ອງຫງຽມປ້ອງກັນນະຄອນໄວ້. ເອົາສິ່ງຂີດຂວາງມາຕັນທາງເຂົ້າອອກທຸກປະຕູ.

ນາຍົກລັດຖະມົນຕີ: ພະອົງ, ພວກເຮົາເຄີຍໃຊ້ມາດຕະການແບບນີ້ມາແລ້ວ ແຕ່ບໍ່ມີຜົນຫຍັງເລີຍ ຕາບໃດທີ່ພວກເຮົາຍັງມີອີແມ່ມົດຢູ່ນຳ.

ພະລາຊາເມືອງເປັງຈານ: ອີແມ່ມົດໃດຫວ໊ະ? ນາງກິນນາຣີຫັ້ນບໍ?

ນັກບວດ: ນາງແມ່ນຕົ້ນເຫດຂອງບັນຫາທັງໝົດ. ຖ້າບູຊາຍັນນາງ ນະຄອນຂອງພວກເຮົາກໍຈະມີໂຊກໄຊ. ບໍ່ດັ່ງນັ້ນ ພະລາຊາສຸກັນຕູີມາກໍຈະທຳລາຍນະຄອນຂອງພວກເຮົາລາບ ເປັນໜ້າກອງໃດ່.

ພະລາຊາເມືອງເປັງຈານ: ຖ້າເຮົາທຳຮ້າຍນາງ ສີທົນກໍຈະຂ້າເຮົາ.

ນັກບວດ: ສີທົນຊົດໄຊ້ກຳທີ່ກໍ່ຂຶ້ນແລ້ວ.

ນາຍົກລັດຖະມົນຕີ: ພະອົງຕ້ອງຄຶດເຖິງຄວາມປອດໄພຂອງປະຊາຊົນ ແລະຄົນຂອງພະອົງ.

ນັກບວດ: ໃຫ້ຂ້ານ້ອຍຕຽມພິທີບູຊາຍັນໄດ້ແລ້ວບໍ? *(ພະລາຊາງຶກຫົວ ແລະຍ່າງອອກໄປ)*

*ເວທີມືດລົງ*

**ສາກທີຫ້າ**

ນາຍົກລັດຖະມົນຕີ: *(ມີຄົນເອົາມະໂນລາທີ່ຖືກມັດເຂົ້າມາ)* ເຈົ້າຕ້ອງຮັບຜິດຊອບທີ່ກໍ່ສົງຄາມນີ້ຂຶ້ນ ມີແຕ່ການຕາຍຂອງເຈົ້າທໍ່ນັ້ນ ພະຜູ້ເປັນເຈົ້າຈິ່ງຈະເຮັດໃຫ້ເຫດການນີ້ສະຫງົບລົງໄດ້.

ມະໂນລາ: ພວກນົກບອກຂ້ອຍວ່າ ສີທົນໄດ້ຮັບໄຊຊະນະ ແລະກຳລັງກັບມາ.

ນາຍົກລັດຖະມົນຕີ: ພະລາຊາບໍ່ພໍພະໄທ ແລະຜູ້ຄົນກໍກຽດຊັງເຈົ້າ. ຕຽມກໍ່ກອງໄຟ. *(ຍ່າງອອກໄປ)*

ພະລາຊາເມືອງເປັງຈານ: *(ພະລາຊາແລະພະລາຊິນີຍ່າງເຂົ້າມາ)* ມະໂນລາ, ເຈົ້າເຮັດໃຫ້ໂລກເຮົາຕົກຢູ່ໃນຄວາມວຸ່ນວາຍ.

| | |
|---|---|
| ມະໂນລາ: | ຂ້ານ້ອຍເປັນຜູ້ອ່ອນແອ ຕົກຢູ່ໃນອຳນາດຂອງພະອົງ. ຖ້າຫາກພະອົງປະສົງຈະທຳລາຍຈິດວິນຍານຂອງປ່າໄມ້, ພະອົງກໍຈະນຳຄວາມຫາຍຍະນະມາສູ່ພະອົງເອງ. |
| ພະລາຊາເມືອງເປັງຈານ: | ພໍແລ້ວ! |
| ມະໂນລາ: | ຂ້າແຕ່ພະລາຊີນີ, ຂໍໃຫ້ຂ້ານ້ອຍໄດ້ຟ້ອນເປັນການຖະຫວາຍບູຊາແດ່ທ້ອນ. ມັນຊ່ວຍປັດເປົ່າໂລກໄພໄຂ້ເຈັບ ແລະອາດຊ່ວຍຊີວິດພະນາງໄດ້ນຳ. |
| ພະລາຊີນີ: | ໄດ້ຕີ ພວກເຮົາອະນຸຍາດໃຫ້ນາງຟ້ອນເປັນເທື່ອສຸດທ້າຍໄດ້. ເອົາປີກມາໃຫ້ນາງ. |
| ພະລາຊາເມືອງເປັງຈານ: | ຈັ່ງຊັ້ນກະຟ້ອນສາ ມະໂນລາເອີ້ຍ, ຟ້ອນເປັນຄັ້ງສຸດທ້າຍສາ *(ສຽງກອງດັງຂຶ້ນ, ມະໂນລາຟ້ອນ ຕໍ່ມາກໍບິນໜີໄປ)* |
| ນາຍົກລັດຖະມົນຕີ: | *(ແລ່ນເຂົ້າມາພ້ອມກັບນັກບວດ)* ພະອົງກຳລັງເຮັດຫຍັງ? ຈັບນາງໄວ້! |
| ມະໂນລາ: | *(ຢູ່ເທິງອາກາດ)* ໂອ້ ພະລາຊາເຈົ້າ ຈົ່ງຮູ້ໄວ້ວ່າ ຂ້ານ້ອຍໜີໄປ ແຕ່ລູກຊາຍຂອງພະອົງກຳລັງມາ. *(ສຽງກອງແຕກຕ່າງກັນດັງຂຶ້ນ ຂະນະທີ່ເຈົ້າຊາຍສີທົນເດີນທາງມາຮອດພ້ອມດ້ວຍກອງທັບ. ສ່ວນນາຍົກລັດຖະມົນຕີ ແລະນັກບວດໜີພ່າຍໄປ)* |
| ສີທົນ: | ສະເດັດພໍ່, ຢູ່ໃສຄືບໍ່ມີການຮັບຕ້ອນກອງທັບທີ່ໄດ້ຮັບໄຊຊະນະກັບມາ? ເປັນຫຍັງສະເດັດພໍ່ຈຶ່ງບໍ່ໄປຮັບພວກເຮົາຢູ່ປາກປະຕູວັງ? |
| ພະລາຊີນີ: | ລູກແມ່! |

ພະລາຊາເມືອງເປັງຈານ: ລູກໜີມາໄດ້ແນວໃດ?

ສີທົນ: ແມ່ນຫຍັງໜີມາ? ລູກບໍ່ໄດ້ຖືກຈັບນ່າ. ກອງທັບຂອງພວກເຮົາຄຸມສະຖານະການໄດ້ໝົດຕັ້ງແຕ່ເລີ່ມຕົ້ນພຸ້ນນ່າ.

ພະລາຊາເມືອງເປັງຈານ: ພວກເຮົາໄດ້ຍິນແຕ່ຂ່າວການປະລາໄຊຂອງລູກ.

ສີທົນ: ຖ້າຈັ່ງຊັ້ນ ກໍມີບາງຄົນຫວັງຢາກໄດ້ຜົນປະໂຫຍດຈຶ່ງທູນຄວາມເທັດແບບນັ້ນ. ມະໂນລາຢູ່ໃສ?

ພະລາຊາເມືອງເປັງຈານ: ໄປແລ້ວເດ້.

ສີທົນ: ພໍ່ຂ້ານາງບໍ?

ພະລາຊີນາ: ສີທົນ, ຄວາມຈິງແລ້ວ ນາງບິນໜີໄປດ້ວຍປີກຂອງນາງເອງ. ແຕ່ບໍ່ແມ່ນຄວາມຜິດຂອງພວກເຮົາ...ພວກເຮົາຄິດວ່າລູກຕາຍໄປແລ້ວ ແລະພະລາຊາສຸກັນດູ໊ມາຈະມາໂຈມຕີນະຄອນຂອງເຮົາ ແລະຜູ້ທີ່ເປັນຕົ້ນເຫດກໍຄືນາງກິນນາຣີນີ້ລະ.

ພະລາຊາເມືອງເປັງຈານ: ພໍ່ອອກຄຳສັ່ງໃຫ້ບູຊາຍັນນາງ ແຕ່ແມ່ຂອງເຈົ້າສະຫຼາດຫຼັກແຫຼມກວ່າ ຈຶ່ງປ່ອຍໃຫ້ນາງໄປ.

ສີທົນ: ລູກບໍ່ໂທດສະເດັດພໍ່ສະເດັດແມ່ດ່ອກ. ພະອົງທັງສອງຖືກຄົນຕົວະຍົ່ວະ. ແຕ່ວ່າລູກຈະໄປຊອກຫານາງ. ຕາມທີ່ລູກຮູ້ອານາຈັກຂອງນາງຢູ່ໄກຫຼາຍ ແລະຍາກທີ່ໄປເຖິງໄດ້ ສະເດັດພໍ່ສະເດັດແມ່ອາດສູນເສຍລູກຊາຍໃນມື້ນີ້ເລີຍກໍເປັນໄດ້.

*(ສີທົນຍ່າງອອກໄປທິດທາງກົງກັນຂ້າມກັບພະລາຊາແລະພະລາຊີນີ)*

*ເວທີມືດລົງ*

| | |
|---|---|
| ມະໂນລາ: | *(ໄຟສະປອດໄລຕ໌)* ພະລາຊາຮັບສັ່ງຖືກຕ້ອງແລ້ວ. ພວກເຮົາກິນນາຣີບໍ່ສາມາດຢູ່ກິນຮ່ວມກັບມະນຸດໄດ້. ພວກເຮົາແຕກຕ່າງກັນຫຼາຍ. ຄວາມຮັກເຮັດໃຫ້ພວກເຮົາຕາບອດ ແຕ່ໃນທີ່ສຸດພວກເຮົາກໍຮູ້ວ່າ ມັນເປັນໄປບໍ່ໄດ້. ຂ້ອຍດີໃຈທີ່ໄດ້ກັບຄືນມາອານາຈັກກິນນາຣີຂອງຂ້ອຍ. *(ເຄາະປະຕູ)* ທະຫານຍາມ, ໃຫ້ຂ້ອຍເຂົ້າໄປແດ່. |
| ທະຫານຍາມ: | ກັບໄປສາ! ບໍ່ອະນຸຍາດໃຫ້ໃຜເຂົ້າມາ. |
| ມະໂນລາ: | ຂ້ອຍແມ່ນມະໂນລາ ລູກສາວຂອງພະລາຊານ່າ. |
| ທະຫານຍາມ: | ຂ້ອຍຮູ້ວ່າເຈົ້າແມ່ນໃຜ ໂດຍສະເພາະເຈົ້າແລ້ວ ຍິ່ງບໍ່ໃຫ້ເຂົ້າຊໍ້າ. ທົ່ວອານາຈັກກຳລັງມີໄຂ້ຫວັດນົກລະບາດ. ຢູ່ນີ້ທຸກຄົນຕ້ອງມີການປ້ອງກັນໄວ້ກ່ອນ ຈຶ່ງບໍ່ໃຫ້ໃຜເຂົ້າໄປ, ໂດຍສະເພາະຜູ້ທີ່ເຄີຍພົວພັນກັບພວກມະນຸດມາກ່ອນ. |
| ມະໂນລາ: | ໄຂ້ຫວັດນົກຫວ໊ະ? ແມ່ນຫຍັງເກາະ? ຂ້ອຍຈະໃຫ້ກວດກະໄດ້ ເພື່ອພິສູດວ່າຂ້ອຍບໍ່ໄດ້ເປັນພະຍາດນີ້. |
| ທະຫານຍາມ: | ບໍ່ໄດ້ ເພິ່ນອອກກົດໝາຍໄວ້ແລ້ວ. ເຈົ້າຈະບໍ່ໄດ້ຮັບອະນຸຍາດໃຫ້ເຂົ້າໄປໃນອານາຈັກ ຈົນກວ່າຈະໄດ້ 7 ປີ, 7 ເດືອນ, 7 ມື້ຜ່ານໄປກ່ອນ. ຕໍ່ຈາກນັ້ນເຈົ້າຈະຕ້ອງເຂົ້າພິທີລ້າງຮອຍມົນທິນ ທີ່ເປິະເປື້ອນມາຈາກຕົວມະນຸດ. |
| ມະໂນລາ: | ແມ່ນຫຍັງຮອຍມົນທິນຈາກຕົວມະນຸດ? |
| ທະຫານຍາມ: | ກິ່ນເໝັນແທ້. ຢູ່ນີ້ຂ້ອຍກໍຍັງໄດ້ກິ່ນຈາກຕົວເຈົ້າແລ້ວ. |

ມະໂນລາ: ບໍ່ມີເຫດຜົນຫຍັງເລີຍ. ແຕ່ບອກຂ້ອຍແດ່ດູ້ ສະເດັດພໍ່ສະເດັດແມ່ ດຽວນີ້ເພິ່ນເປັນແນວໃດ? ເອື້ອຍຂ້ອຍເດ້ເປັນແນວໃດ?

ທະຫານຍາມ: ຍັງມີຊີວິດຢູ່.

ມະໂນລາ: ບອກພວກເພິ່ນແດ່ວ່າ ຂ້ອຍກໍຍັງມີຊີວິດຢູ່ຄືກັນ. ຂ້ອຍຈະກັບຄືນມາອີກ ເມື່ອໃດທີ່ຊຳລະບາບສິ້ນສຸດລົງ.

*(ນາງກິນນາຣີຢູ່ເທິງອາກາດ ແລະຫຼຽວລົງມາລຸ່ມ)*

**ສາກທີຫົກ**

ດາຣາ: ດຽວນີ້ມະໂນລາເຮັດຫຍັງຢູ່ນໍ້? ນາງບໍ່ສາມາດກັບມາບ້ານໄດ້ເປັນເວລາເຈັດປີພຸ້ນນ່າ ແລະສີທົນຈະຕ້ອງຊອກຫານາງຢ່າງໜ້ອຍເຈັດປີ. ລາວຈະຕ້ອງຜະຈົນໄພ ໂດຍໃຊ້ໝາກນາວວິເສດ ທີ່ລືສີເອົາໃຫ້ລາວ.

ກາລີ: ໝາກນາວຫວ໊ະ?

ດາຣາ: ໃນສະໄໝນັ້ນ ໝາກນາວເປັນສິ່ງວິເສດໃດ໋.

ລານີ: ແຕ່ວ່າ ເຖິງແມ່ນໝາກນາວວິເສດກໍຊ່ວຍລາວບໍ່ໄດ້ດ໋ອກ ເວລາລາວຜ່ານທະເລນໍ້າກົດ ຖ້າມີສິ່ງໃດຕົກລົງໄປ ມັນກໍຈະເປື່ອຍໝົດ.

ດາຣາ: ຂ້ອຍເຊື່ອວ່າ ໝາກນາວຊ່ວຍລາວໄດ້ ເວລາຂ້າມແມ່ນໍ້າ ຊຶ່ງມີປາບຶກໃຫຍ່ ມີໝວດຄົມສາມາດຕັດຄົນໃຫ້ຂາດໄດ້…

ລານີ: ຄັນຊັ້ນ ລາວກໍບໍ່ຈຳເປັນໃຊ້ມັນລະຕີ້ ເກືອບວ່າບໍ່ມີປາບຶກໃຫຍ່ຫຼົງເຫຼືອແລ້ວເດ້.

ກາລີ: ເຮີ້ຍ, ພວກເຮົາກຳລັງເວົ້າເລື່ອງມະໂນລາຢູ່ ບໍ່ແມ່ນເລື່ອງຂອງສິທົນໃດ໋. ມະໂນລາກຳລັງເລາະໄປມາຕາມປ່າດົງບໍ່ຮູ້ວ່າຊິແນວໃດ.

ດາຣາ: ຖ້າບັງເອີນ ປ່າໄມ້ລະເບີດຂຶ້ນມາເດ້.

ລານີ: ນາງຕ້ອງແລ່ນ, ນ້ຳຕາຍ້ອຍ ກ້ານຄໍຕຶງເຂົ້າ ປີກຂອງນາງອ່ອນແຮງ ຄືຊິຈະບິນບໍ່ໄດ້.

ກາລີ: ຊາວໄຮ່ຊາວນາກຳລັງຈູດປ່າ ເພື່ອໃຫ້ມີດິນປູກເຂົ້າ. ແຕ່ພວກເຮົາແມ່ນກິນນາຣີ ເປັນສັດຂອງປ່າດົງບໍ່ແມ່ນນາເຂົ້າ. ນາງຊິເຮັດແນວໃດຊັ້ນນ່າ?

ມະໂນລາ: *(ຍ່າງເຂົ້າມາ ທັງໄອ)* ໂອ້ຍ, ຄວັນນີ້! ຂ້ອຍຫາຍໃຈບໍ່ໄດ້! ຕົ້ນໄມ້ໄໝ້ແຕກຕຸ໋ບຕັ໋ບ ຈົນແສບແກ້ວຫູ. ພວກນົກຢ້ານກົວເຮັດໃຫ້ຂ້ອຍເຈັບປວດໃຈຫຼາຍ. ຂ້ອຍບໍ່ສາມາດຊ່ວຍຫຍັງພວກມັນໄດ້ເລີຍ.

ເຝີຈ່າຍ: ອອກຈາກບ່ອນຫັ້ນແມ້.

ຮົ່ວ: ຊ່ວຍນາງແດ່ ໄຟຊິໄໝ້ນາງໃດ໋. *(ລາວຈັບແຂນມະໂນລາ)* ມາກັບຂ້ອຍ *(ເອົານ້ຳໃຫ້ນາງກິນ)*

ເຝີຈ່າຍ: *(ໄຟມອດລົງ)* ເອີ ສຳລັບປີນີ້ ສ່ຳນີ້ກໍພໍແລ້ວ. ແຕ່ວ່າດິນບໍ່ດີ. ປີໜ້າພວກເຮົາຈະຕ້ອງຍ້າຍໄປບ່ອນໃໝ່ອີກ.

ມະໂນລາ: ໂອ້ ພວກເຈົ້າຈູດປ່າຕໍ່ໄປເລື້ອຍໆ ບໍ່ດີໃດ໋.

ຮົ່ວ: ພວກເຮົາຕ້ອງເຮັດ ບໍ່ມີດິນພໍທີ່ຈະປູກເຂົ້າ.

มะโบลา: บ่ม่า มันร้ายแรงเกินไป. พวกเจ้าได้สิ่งที่มีคุนค่า จากป่าอยู่แล้ว ເຊັ່ນ: ໜໍ່ໄມ້, ເຫັດ, ໝາກກໍ່, ສະໝຸນໄພປົວພະຍາດນຳອີກ. ພວກເຈົ້າສາມາດປູກສິ່ງອື່ນກະໄດ້.

ເຟີຈ່າຍ: ຢ່າຟັງຄວາມລາວ. ພວກເຮົາເຄີຍໄດ້ຍິນເລື່ອງທັງໝົດນີ້ມາກ່ອນແລ້ວ.

ຮົ່ວ: ພວກເຮົາຈຳເປັນຕ້ອງປູກເຂົ້າເພື່ອລ້ຽງຄອບຄົວ. ພະນັກງານມາບອກພວກເຮົາປູກໝາກໄມ້. ພວກເຮົາປູກໝາກຄາຍ ແຕ່ມັນໃຫ້ໝາກຕາມລະດູການ. ຕົ້ນກ້ວຍແລະໝາກຫຸ່ງຂຶ້ນຢູ່ບ່ອນນີ້ ຮາກຂອງມັນເກາະດິນໄວ້ ແຕ່ພວກເຮົາຢູ່ໄກຕະຫຼາດ ເອົາໄປຂາຍບໍ່ໄດ້.

ມະໂບລາ: ພວກເຈົ້າສາມາດສ້າງຖະໜົນໄດ້.

ເຟີຈ່າຍ: ພວກເຮົາບໍ່ມີເວລາ ແລະບໍ່ມີເງິນ. ນອກຈາກນັ້ນແລ້ວ ຄົນຂອງພວກເຮົາຢູ່ກະແຈກກະຈາຍໄປຕາມພູ. ພວກເຮົາຕ້ອງການຖະໜົນຫຼາຍສາຍ.

ຮົ່ວ: ມີຄົນມາບອກພວກເຮົາໃຫ້ເຊົາຈູດປ່າ ແຕ່ວ່າພວກເຮົາປະດິນເປົ່າຫວ່າງທີ່ເຄີຍປູກບໍ່ໄດ້. ດຽວນີ້ພວກເຮົາຕ້ອງຍ້າຍບ່ອນໄປເລື້ອຍໆ.

ມະໂບລາ: ພວກເຈົ້າປູກອັນອື່ນກະໄດ້...

ເຟີຈ່າຍ: ແມ່ນຢູ່ ຄືພວກຜີໂຊກດີຢູ່ທົ່ງພຽງ ທີ່ປູກໄມ້ສັກ ເພື່ອເອົາມາປຸກເຮືອນ. ແຕ່ໄມ້ສັກປູກບໍ່ຂຶ້ນຢູ່ເຂດພູສູງ. ຕໍ່ມາກໍແມ່ນຢາງພາລາ. ເຂົາເຈົ້າຢາກໃຫ້ພວກເຮົາໄປເຮັດວຽກຢູ່ສວນຢາງພາລາ ແຕ່ມັນເປັນຂອງຄົນຕ່າງປະເທດ. ພວກເຮົາບໍ່ມີຫຍັງ. ຢ່າງໜ້ອຍດຽວນີ້ ພວກເຮົາກໍມີເຂົ້າກິນ.

ອື່ວ: ບໍລິສັດຢາງພາລາບອກວ່າຈະເອົາເຂົ້າໃຫ້ພວກເຮົາ ເປັນເວລາເຈັດປີ ຂະນະທີ່ຕົ້ນຢາງກຳລັງໃຫຍ່ ແຕ່ພວກເຮົາຕ້ອງເອົານ້ຳຢາງທີ່ເກັບມາ ໄປແລກເຂົ້າມາກິນ.

ເຟີຈ່າຍ: ເຮັດແບບນັ້ນພວກເຮົາຈະຕ້ອງເພິ່ງພາພວກເຂົາຕະຫຼອດໄປ. ສວນຢາງພາລາຕ້ອງການເນື້ອທີ່ດິນເພີ່ມຂຶ້ນ ພວກເຮົາຕ້ອງຍ້າຍອອກ.

ມະໂນລາ: ຄັນຊັ້ນ ດິນແມ່ນຂອງໃຜ?

ເຟີຈ່າຍ: ຄຳຖາມໃຫຍ່ນໍ້.

ອື່ວ: ດິນບໍ່ແມ່ນຂອງເຮົາ ເປັນບ່ອນພວກເຮົາໃຊ້ປູກພືດທໍ່ນັ້ນ. ພວກເຮົາເຄີຍປູກຖົ່ວແຮໃສ່ລະຫວ່າງຕົ້ນເຂົ້າ ພືດອື່ນໆໃສ່ປ່າເລົ່າ. ພືດພວກນີ້ຊ່ວຍບຳລຸງດິນ ແລະໄລ່ແມງໄມ້ທີ່ມາທຳລາຍພືດຜົນ. ແຕ່ມາດຽວນີ້ ປ່າເລົ່າປະໄວ້ດົນບໍ່ໄດ້ ພວກເຮົາຕ້ອງໄດ້ໝັ່ນເສຍຫຍ້າ ແລະຍ້າຍບ່ອນຢູ່ເລື້ອຍໆ.

ເຟີຈ່າຍ: ສັດລ້ຽງຂອງພວກເຮົາກໍ່ຊ່ວຍເຮັດໃຫ້ດິນສົມບູນເຊັ່ນກັນ ແຕ່ເຈົ້າຂອງຢາງພາລາບໍ່ມັກສັດລ້ຽງ ສະນັ້ນປະຊາຊົນຕ້ອງຂາຍງົວ, ໝູແລະແບ້ຂອງເຂົາເຈົ້າ. ພວກເຮົາບໍ່ສາມາດເຮັດຫຍັງໄດ້?

ມະໂນລາ: ເອີ້, ແນວໃດພວກເຈົ້າກໍ່ບໍ່ຄວນຈູດປ່າຕໍ່ໄປເລື້ອຍໆ.

ອື່ວ: ບໍ່ ພວກເຮົາຮູ້ຢູ່ ວ່າມັນບໍ່ດີ. ພວກເຮົາຈູດ ແຕ່ວ່າພວກເຂົາຊ້ຳພັດຕັດໄມ້ເກາະ. ເບິ່ງບ່ອນຫັ້ນແມ່ ພູເກືອບແປນໝົດໜ່ອຍແລ້ວ ແຕ່ບໍ່ແມ່ນພວກເຮົາເຮັດ.

ມະໂນລາ: ທຸກຄົນທຳລາຍປ່າໄມ້ຂອງຂ້ອຍຫັ້ນລະ. ພວກກິນນາຣີຈະພາກັນໄປຢູ່ໃສ ຖ້າຕົ້ນໄມ້ຖືກຕັດໝົດແລ້ວ?

| | |
|---|---|
| ຮົ່ວ: | ເຈົ້າມາຢູ່ນຳພວກເຮົາກະໄດ້. |
| ມະໂນລາ: | ຂ້ອຍບໍ່ແມ່ນຊາວໄຮ່ຊາວສວນໃດ໋. |
| ຮົ່ວ: | ເຈົ້າຕ່ຳແຜ່ນຈັກສານກະໄດ້? |
| ມະໂນລາ: | ບໍ່, ຂ້ອຍຮູ້ວ່າດິນເອງຄວນຈະເຮັດຫຍັງ. ຂ້ອຍຈະປູກຕົ້ນໄມ້ໃຫຍ່ ເຊັ່ນ: ຄົ້ນສົນ, ໄມ້ຮື້ງ, ໄມ້ມີ້ ແລະໄມ້ສະແກ ສຳລັບກິນນາຣີ ແລະນົກອື່ນໆ. ຊ່ວຍຂ້ອຍເກັບແກ່ນໄມ້ແດ່ ຂ້ອຍຈະກ້າເບ້ຍໄມ້ ເອົາໄປປູກໃສ່ບ່ອນໂລ່ງ. |
| ຮົ່ວ: | ໃຊ້ເວລາດົນໂພດ ກວ່າພວກມັນຈະໃຫຍ່. |
| ມະໂນລາ: | ແຕ່ວ່າພວກເຮົາຕ້ອງປູກຕົ້ນໄມ້ທີ່ຈູດໄປແລ້ວ ຄືນໄໝ່ໃດ໋. ຖ້າບໍ່ດັ່ງນັ້ນ ນ້ຳຈະເຊາະໜ້າດິນ ເຮັດໃຫ້ດິນໝື່ນ. |
| ເຟີຈ່າຍ: | ເຈົ້າກໍຄືອິງການພັດທະນາອື່ນໆນັ້ນແຫລະ ມາແລ້ວກະໄປ. |
| ມະໂນລາ: | ຂ້ອຍຢູ່ປ່ານີ້ມາໄດ້ພັນໆປີແລ້ວໃດ໋ ດົນກວ່າພວກເຈົ້າອີກຊ້ຳ. |
| ເຟີຈ່າຍ: | ຟັງລາວແມ໋ ດຽວນີ້ລາວທວງເອົາດິນຄືນແລ້ວໃດ໋. |
| ຮົ່ວ: | ຂ້ອຍວ່າຄວາມຄິດລາວກໍດີຢູ່ໃດ໋. ພວກເຮົາໄປຖາມນາຍບ້ານເບິ່ງເທາະ. |
| ເຟີຈ່າຍ: | ລາວບໍ່ໃຫ້ເຈົ້າເຮັດແນວນັ້ນດ໋ອກ. ລາວຕ້ອງບອກວ່າ ພວກເຂົາຕ້ອງການດິນເພື່ອປູກຢາງພາລາ ເຖິງວ່າລາຄາໃນທ້ອງຕະຫຼາດຕົກຕ່ຳ ຈີນກະສິກອນຕ້ອງຕັດຕົ້ນຢາງຂອງຕົນຖິ້ມກໍຕາມ. ພວກເຂົາຕ້ອງການແຕ່ໄມ້ທ່ໍນັ້ນ. |
| ຮົ່ວ: | ນິ ນາຍບ້ານ ພວກເຮົາມີຂໍ້ສະເໜີ. |

ຊຽງໝັ້ງ: *(ລາວມີຊາເບື້ອງດຽວ ຍໍແຂນຂຶ້ນ)* ມີງົບປະມານເທົ່າໃດ?

ຮົ່ວ: ບໍ່ມີງົບປະມານ.

ຊຽງໝັ້ງ: ຖ້າຈັ່ງຊັ້ນ ບໍ່ຕ້ອງເວົ້າກັນ.

ມະໂນລາ: ໂອ້ ຂ້ອຍມີງົບປະມານຫຼາຍໃດ໋.

ຊຽງໝັ້ງ: *(ຫຼຽວເບິ່ງມະໂນລາ)* ຮື ນາງຄົນງາມນີ້ແມ່ນໃຜ?

ຮົ່ວ: ເຈົ້າບໍ່ເຫັນບໍ ນາງເປັນກິນນາຣີນ່າ?

ຊຽງໝັ້ງ: *(ເອົາມືສີແກ່ນຕາ)* ຂ້ອຍກໍວ່າແນວນັ້ນ. ຊັ້ນກະດີແລ້ວ
ເງິນໂດລາບໍ? ຫຼືວ່າ ເງິນຢູໂຣ?

ມະໂນລາ: ດີກວ່ານັ້ນອີກຊ້ຳ. *(ນາງເຮັດທ່າທາງນັບເງິນ)*
ໃນຊີວິດຂອງເຈົ້າ ເຄີຍເຫັນເງິນຫຼາຍແບບນີ້ບໍ?

ຊຽງໝັ້ງ: ຮື?

ມະໂນລາ: ໜຶ່ງພັນ, ໜຶ່ງຮ້ອຍພັນ, ໜຶ່ງລ້ານ.

ຊຽງໝັ້ງ: ຮື?

ມະໂນລາ: ເງິນທີ່ເບິ່ງບໍ່ເຫັນ ຫາໄດ້ງ່າຍ. ເຈົ້າຢາກໄດ້ຫຼາຍເທົ່າໃດກໍໄດ້
ບໍ່ມີໃຜຈະມາລັກເງິນເຈົ້າໄດ້.

ຊຽງໝັ້ງ: ແນ່ນອນຢູ່ແລ້ວ.

ຮົ່ວ: ໃຊ້ເລ່ຫຼ່ຽມຂອງເຈົ້າຫັ້ນແຫຼະ!

ຊຽງໝ້ຽງ: ເງິນທີ່ເບິ່ງບໍ່ເຫັນເປັນແນວໃດເກາະ?

ມະໂນລາ: ກໍການລົງທຶນຫັ້ນເນ່. ເຈົ້າອາດຈະບໍ່ເຫັນເງິນມື້ນີ້ ແຕ່ເຈົ້າຈະເຫັນມັນໃນອະນາຄົດ. ຂ້ອຍມີຂໍ້ສະເໜີໃຫ້ປູກແກ່ນໄມ້.

ຊຽງໝ້ຽງ: ຈັ່ງຊັ້ນ ເຈົ້າກໍຕ້ອງເຮັດວຽກ...ເປັນສະຕະວັດພຸ້ນຕີ້. ຢູ່ນີ້ບໍ່ມີໃຜຊ່ວຍເຈົ້າດ໋ອກ. ຜູ້ໃດກໍຫຍຸ້ງນຳແຕ່ປູກເຂົ້າ. ນອກຈາກນີ້ແລ້ວ ປ່າໄມ້ມັນຂຶ້ນເອງ ເປັນປ່າທີສອງ ຄືປ່າເລົ່າຫັ້ນເດ້.

ມະໂນລາ: ຂ້ອຍຈະເຮັດໂຄງການ ມີຜູ້ຕາງຄົນໜຶ່ງຢູ່ໃນເມືອງ ເພື່ອຊັກຊວນນັກທ່ອງທ່ຽວ ໃຫ້ເຂົາເຈົ້າປະກອບສ່ວນເປັນແກ່ນໄມ້ ຫຼືວ່າໃຫ້ເຂົາເຈົ້າມາປູກຢູ່ນີ້ເລີຍ. ໃຫ້ນັກທ່ອງທ່ຽວຮູ້ສຶກວ່າ ຕົນເອງໄດ້ທຳປະໂຫຍດໃຫ້ແກ່ສະຖານທີ່ພວກຕົນມາທ່ຽວຊົມ. ພວກເຮົາພຽງແຕ່ຈັດຕັ້ງໃຫ້ມັນເກີດຂຶ້ນທໍ່ນັ້ນ.

*(ພວກເຂົາເຈົ້າສະແດງທ່າທາງຕົກລົງເຫັນດີ ດ້ວຍມື ແລະສີໜ້າ)*

ດາຣາ: ດັ່ງນັ້ນ ມະໂນລາຈຶ່ງເລີ່ມໂຄງການຂອງນາງ. ນາງຫາເກັບແກ່ນໄມ້ ກ່ອນທີ່ຊາວໄຮ່ຊາວສວນຈະພາກັນຈູດໄຮ່ ແລະເມື່ອເຂົາເຈົ້າຍ້າຍໄປບ່ອນໃໝ່ ນາງກໍປູກແກ່ນໄມ້ຢູ່ດິນທີ່ປະຖິ້ມໄວ້. ນາງເຮັດວຽກເປັນເວລາດົນນານ ແລະເປັນວຽກຍາກ ແຕ່ຕໍ່ມາກໍມີຜູ້ຄົນມາຊ່ວຍນາງເພີ່ມຂຶ້ນເລື້ອຍໆ.

ການີ: ເຈັດປີຜ່ານໄປ ຕົ້ນກ້າໄດ້ກາຍເປັນຕົ້ນໄມ້ນ້ອຍ, ສີຫົນຍ່າງເຂົ້າມາໃກ້ໜອງ. ລາວໄດ້ຍິນສຽງຫົວຂອງພວກເຮົາ ເວລາລົງຫຼິ້ນນ້ຳ. ລາວບໍ່ຈື່ມະໂນລາ. ຜິວໜັງຂອງນາງຄ້ຳ ຍ້ອນແສງແດດ. ຄວາມງາມ

ຂອງນາງອັບເສົາລົງຍ້ອນເຮັດວຽກ ແຕ່ເມື່ອສີທົນ ໄດ້ຍິນສຽງຂອງນາງ ລາວກໍຮູ້ໄດ້ວ່າແມ່ນມະໂນລາ. ລາວປະແຫວນໄວ້ໃກ້ກັບປີກຂອງນາງ.

ລານີ: ຕໍ່ມາ ສີທົນກໍພົບນາງຢູ່ໃນໄຮ່.

ມະໂນລາ: *(ພັກຜ່ອນ ຈັບຊວ້ານຢູ່)* ສີທົນ, ໃນທີ່ສຸດ ເຈົ້າກໍພົບຂ້ອຍ.

ສີທົນ: ອ້າຍສ່ຽງຊີວິດຫຼາຍຄັ້ງຫຼາຍຫົນ ເພື່ອມາບ່ອນນີ້.

ມະໂນລາ: ອ້າຍພະຈົນໄພມາພໍແລ້ວບໍ ແລະຕຽມພ້ອມທີ່ຈະລົງຫຼັກ ປັກຖານແລ້ວບໍ?

ສີທົນ: ໄດ້ໃຊ້ຊີວິດຢູ່ກັບນ້ອງ ຖືວ່າແມ່ນການຜະຈົນໄປທີ່ຍິ່ງ ໃຫຍ່ທີ່ສຸດແລ້ວ.

ມະໂນລາ: ເປັນຄຳຕອບທີ່ດີ. ອ້າຍຍັງຕ້ອງການນ້ອງຢູ່ບໍ? ນ້ອງບໍ່ງາມຄືແຕ່ກ່ອນແລ້ວໃດ໋.

ສີທົນ: ອ້າຍກໍແກ່ຊະລາຄືກັນ ແຕ່ສະຫຼາດຂຶ້ນ.

ມະໂນລາ: ເປັນຄຳຕອບທີ່ດີອີກຕື່ມ ແຕ່ວ່ານ້ອງຕ້ອງຖາມນາຍ ບ້ານກ່ອນ.

ສີທົນ: ບໍ່ແມ່ນພໍ່ຂອງນ້ອງຕິ?

ມະໂນລາ: ພໍ່ຈາກໂລກໄປແລ້ວ ຍ້ອນໄຂ້ຫວັດນົກ. ດຽວນີ້ຊຽງໝັ້ງເປັນຜູ້ດູແລນ້ອງ.

ສີທົນ: ໂອ້ ທີ່ຮັກ! ເປັນຫຍັງຕ້ອງໃຫ້ຄົນຫຼອກລວງມາຈັດການ ຊີວິດຂອງພວກເຮົາ?

ຊຽງໝ້ຽງ: *(ຍ່າງເຂົ້າມາ ທັງເວົ້ານຳ)* ໂອ້ ນີ້ແມ່ນເຈົ້າສີທົນທີ່ຜູ້ຄົນຊ່າລື ກັນຫັ້ນບໍ? ບໍ່ເຫັນປະທັບໃຈປານໃດນ່າ? ມະໂນລາ ຂ້ອຍຈະທົດສອບລາວ ເພື່ອໃຫ້ໝັ້ນໃຈວ່າ ລາວຮັກເຈົ້າແທ້ບໍ.

ສີທົນ: ຂ້ອຍພ້ອມສະເໜີທີ່ໃຫ້ທົດສອບ ແຕ່ບໍ່ແມ່ນໃຊ້ເລ່ກົນໃດ໋.

ຊຽງໝ້ຽງ: ເອີ້, ຈັ່ງຊັ້ນກະດີແລ້ວ ຢ່າຫວັງວ່າຈະມີແມງວັນວິເສດ ມາຊ່ວຍເຈົ້າເດີ້. ສັດວິເສດພວກນັ້ນສູນພັນໄປດົນນານແລ້ວ. ເຈົ້າຄືຊິເປັນຄົນສະຫຼາດ ມີການສຶກສາດີ. ພວກເຮົາຢາກ ໃຫ້ເຈົ້າສ້າງຖະໜົນເສັ້ນໜຶ່ງໃຫ້ ຈະຕ້ອງເປັນຖະໜົນທີ່ ທົນທານ ບໍ່ເຊາະເຈື່ອນ ຖ້າປີໜ້າຝົນຕົກແຮງ.

ສີທົນ: ແມ່ນຫຍັງ? ໃຫ້ຂ້ອຍສ້າງຖະໜົນຄົນດຽວຫວ໊ະ?

ຊຽງໝ້ຽງ: ຄວາມຮັກຂອງເຈົ້າຍັງບໍ່ໜັກແໜ້ນພໍຊັ້ນບໍ? ບໍ່ຕ້ອງຢ້ານດ໋ອກ ພວກເຮົາຊິຊ່ວຍ ແຕ່ເຈົ້າຕ້ອງເປັນຄົນວາງແຜນ.

ສີທົນ: ຕົກລົງ, ຂ້ອຍຈະເລີ່ມລົງມື...

ຊຽງໝ້ຽງ: ຍັງບໍ່ໝົດເທື່ອໃດ໋. ຫຼັງຈາກສ້າງຖະໜົນແລ້ວ ຂ້ອຍຈະໃຫ້ເຈົ້າ ເດີນທາງ.

ມະໂນລາ: ບໍ່ຍຸດຕິທຳຕິ. ລາວເດີນທາງມາເປັນເວລາດົນນານແລ້ວເດ້.

ຊຽງໝ້ຽງ: ສະນັ້ນ ຖືວ່າລາວມີປະສົບການແລ້ວ. ລາວສາມາດຂີ່ນົກແຮ້ງ ໄປ ຖ້າຕ້ອງການ. ລາວຈະຕ້ອງໄປນະຄອນວໍຊິງເຕີນ.

ສີທົນ: ໂຮ໋ ໄກແທ້! ຂ້ອຍຕ້ອງມີແຮ້ງຫຼາຍໂຕໃດ໋.

ຊຽງໝັ້ງ: ໄປຮອດຫັ້ນ ໃຫ້ເຈົ້າຍື່ນຂໍ້ສະເໜີໃຫ້ອາເມລິກາ ໃຫ້ພວກເຂົາມາເອົາຂອງຂວັນ ທີ່ພວກເຂົາປະຖິ້ມໄວ້ຄືນໄປ.

ສີທົນ: ຂອງຂວັນອີ່ຫຍັງ?

ຊຽງໝັ້ງ: ລູກບອມບີຫັ້ນເນ່ ຂອງຂວັນລະ ເພາະວ່າພວກເຮົາບໍ່ເຄີຍຂໍຮ້ອງພວກເຂົາຈັກເທື່ອ. ຖ້າພວກເຂົາເກັບລູກບອມບີອອກ ພວກເຮົາກໍຈະມີດິນປູກຝັງຫຼາຍຂຶ້ນ ແລະບໍ່ຈໍາເປັນຕ້ອງຈູດປ່າ. ພວກເຮົາສູນເສຍດິນ ເສຍສະລະແຂນຂາຍ້ອນລູກບອມບີ ຫຼາຍເກີນໄປແລ້ວ.

ສີທົນ: ຂ້ອຍຄິດວ່າ ບໍ່ດົນມານີ້ ອາເມລິກາກໍເອົາເງິນໃຫ້ຫຼາຍຂຶ້ນ ເພື່ອເກັບກູ້ລູກບອມບີ.

ຊຽງໝັ້ງ: ຍັງບໍ່ພໍ. ພວກເຮົາຕ້ອງການວິຊາການ ຕ້ອງການໝາດົມກິ່ນ ແລະອຸປະກອນຕ່າງໆ. ມັນແມ່ນຄວາມຮັບຜິດຊອບຂອງພວກເຂົາ. ເຈົ້າໄປພົບໝູ່ຂອງຂ້ອຍຄົນໜຶ່ງຢູ່ພັກຣີພັບບລິກເກີນ ຊື່ວ່າ ໄມ້ເຄີລ໌ ຮົງດາ. ບອກໃຫ້ລາວຊັກຊວນສະພາຄອນແກຼສ ໃຫ້ມາເກັບເສດເຫຼັກຈາກສົງຄາມອອກໄປ.

ສີທົນ: ເຈົ້າສະຫຼາດກວ່າຂ້ອຍອີກຊໍ້າ. ນອກຈາກນີ້ *(ເອົາມືຊີ້ໃສ່ຂາຊຽງໝັ້ງ).* ເຈົ້າຄວນໄປເອງນ່າ.

ຊຽງໝັ້ງ: ແຕ່ວ່າ ເຈົ້າເປັນພະເອກເຈົ້າຊູ້ເດ້ ເຈົ້າເຮັດໃຫ້ພວກເຂົາປະທັບໃຈດີກວ່າຂ້ອຍ.

ມະໂນລາ: ອ້າຍປະຕິເສດບໍ່ໄດ້ແລ້ວ. ເສຍໃຈນໍາເດີ້ ທີ່ຮັກ ອ້າຍຖືກຫຼອກແລ້ວ.

ຊຽງໝັ້ງ: ແມ່ນແລ້ວ ໄປຮອດວໍຊິງເຕີນ ເຈົ້າຈະທໍາໜ້າທີ່ໄດ້ດີ. ພວກເຮົາບໍ່ສາມາດເປັນເຈົ້າຂອງບ້ານເກີດເມືອງ

ນອນຂອງພວກເຮົາໄດ້ ຈົນກວ່າລະເບີດບໍ່ທັນແຕກຈະ
ຖືກເກັບກູ້ອອກໝົດ.

ສີທົນ: ມະໂນລາ, ນ້ອງຈະລໍຖ້າອ້າຍດົນປານນັ້ນພຸ້ນຫວ໊ະ?

ມະໂນລາ: ບໍ່ແມ່ນຕະຫຼອດໄປດ໋ອກ. ມັນເປັນວຽກທີ່ເຮັດໃຫ້ແລ້ວ.
ລູກລະເບີດບໍ່ທັນແຕກສາມາດເກັບກູ້ອອກໄດ້.

ສີທົນ: ອາດໃຊ້ເວລາອີກຕື່ມເຈັດປີໃດ໋ ນ້ອງ.

ມະໂນລາ: ຮອດຕອນນັ້ນ ປ່າໄມ້ຂອງນ້ອຍກໍໃຫຍ່ແລ້ວ.
ນ້ອງຈະປູກຕົ້ນໝາກນາວສຳລັບອ້າຍ.

ຊຽງໝັ້ງ: ເອົາລູກບອມບີອອກ ບໍ່ພຽງແຕ່ຊ່ວຍພວກເຮົາ ຊຶ່ງເປັນຊາວ
ໄຮ່ຊາວນາທີ່ນັ້ນ ຍັງຊ່ວຍປົວບາດແຜສົງຄາມນຳອີກໃດ໋
ຄວາມບໍ່ໄວ້ເນື້ອເຊື່ອໃຈກັນລະຫວ່າງລາວສູງ, ລາວເທີງແລະ
ລາວລຸ່ມກໍຈະໝົດໄປ. ເມື່ອບໍ່ມີລູກບອມບີແລ້ວ ພວກເຮົາຈຶ່ງ
ຄ່ອຍມາຄິດກັນວ່າ ຈະເຮັດວຽກຮ່ວມກັນແນວໃດ ເພື່ອອະນາ
ຄົດ.

ສີທົນ: ມະໂນລາ, ອ້າຍບໍ່ເຫັນນ້ອງຟ້ອນຈັກເທື່ອໃດ໋ ເອົາປີກມາໃສ່
ແລ້ວຟ້ອນໃຫ້ພວກເຮົາເບິ່ງແດ່ດູ໊.
*(ພວກນາງກິນນາລີບິນລົງມາ ແລ້ວຟ້ອນພ້ອມກັນ)*

- ຈົບບໍລິບູນ -